ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ກະຊວງອຸດສາຫະກຳ ແລະ ການຄ້າ

ຫ້ອງການ ເລກທີ 1584 /ຫອຄ.

ນະຄອນຫຼວງວຽງຈັນ, ວັນທີ 05 ກໍລະກົດ 2016

# ແຈ້ງການ

ເຖິງ: ພະແນກອຸດສາຫະກຳ ແລະ ການຄ້າ ແຂວງ, ນະຄອນຫຼວງ

ເລື່ອງ: ການບັນຈຸທຸລະກິດຂອງຂະແໜງການໂຍທາທິການ ແລະ ຂົນສົ່ງ ເຂົ້າໃນບັນຊີປະເພດ ທຸລະກິດຄວບຄຸມ

- ອີງຕາມກົດໝາຍວ່າດ້ວຍວິສາຫະກິດ (ສະບັບປັບປຸງ 2013) ສະບັບເລກທີ 46/ສພຊ, ລົງວັນທີ 26/12/2013
- ອີງຕາມບົດບັນທຶກກອງປະຊຸມ ສະບັບເລກທີ 0802/ອຄ.ຫຄວ, ລົງວັນທີ 24/6/2016

ຫ້ອງການ ກະຊວງອຸດສາຫະກຳ ແລະ ການຄ້າ ຂໍຖືເປັນກຽດແຈ້ງມາຍັງບັນດາພະແນກອຸດສາຫະກຳ ແລະ ການຄ້າ ແຂວງ ແລະ ນະຄອນຫຼວງວຽງຈັນ ຊາບ ແລະ ປະຕິບັດຢ່າງເຂັ້ມງວດ ດັ່ງນີ້:

1. ກ່ອນການຂຶ້ນທະບຽນວິສາຫະກິດ ໃນທຸລະກິດຂະແໜງການໂຍທາທິການ ແລະ ຂົນສົ່ງ ໃຫ້ເຈົ້າໜ້າທີ່ທະບຽນວິສາຫະກິດທີ່ກ່ຽວຂ້ອງ ສົ່ງໃຫ້ຂະແໜງດັ່ງກ່າວ ເພື່ອພິຈາລະນາ ເຫັນດີ ຫຼື ບໍ່ເຫັນດີ ໃຫ້ຂຶ້ນທະບຽນວິສາຫະກິດກ່ອນທຸກຄັ້ງ;
2. ໃຫ້ເລີ່ມຈັດຕັ້ງປະຕິບັດ ນັບແຕ່ວັນທີ 11 ກໍລະກົດ 2016 ເປັນຕົ້ນໄປ.

(ລາຍລະອຽດບົດບັນທຶກກອງປະຊຸມຄັດຕິດມາພ້ອມນີ້)

ດັ່ງນັ້ນ, ຈຶ່ງໄດ້ແຈ້ງມາເພື່ອຊາບ ແລະ ພ້ອມກັນຈັດຕັ້ງປະຕິບັດຕາມເນື້ອໃນຂ້າງເທິງໃຫ້ໄດ້ຮັບຜົນດີ.

ຮັກສາການຫົວໜ້າຫ້ອງການ

ບຸດທະວັນ ບັນທະວົງ

ບ່ອນສົ່ງ:

- ຄະນະນຳກະຊວງ ເພື່ອຊາບ
- ບັນດາພະແນກ ອຄ ແຂວງ, ນະຄອນຫຼວງ ບ່ອນລະ 1 ສະບັບ
- ສຳເນົາ 2 ສະບັບ